

# ລ້ຽງໝູ ແລະ ປູກໝາກເຜັດ

ທ້າວ ສີຫຼ້າ ແສງດາລາ, ອາຍຸ 27 ປີ, ຈົບຊັ້ນສູງ ສາຂາ ວິຊາປ່າໄມ້ ວິທະຍາໄລກະສິກຳ ແລະ ປ່າໄມ້ພາກເໜືອ, ປັດຈຸບັນຢູ່ບ້ານ ນໍ້າໂອ, ເມືອງ ວຽງພູຄາ, ແຂວງ ຫຼວງນໍ້າທາ. ເນື່ອງຈາກ ມີໃຈຮັກ ທາງດ້ານການປູກ, ການລ້ຽງ, ມີຄວາມຮູ້ທາງດ້ານວິຊາການ ແລະ ຢາກສ້າງລາຍຮັບ ໃຫ້ແກ່ຄອບຄົວຈຶ່ງເຂົ້າຮ່ວມກິດຈະກຳ.

**ທຶນທີ່ໄດ້ຮັບ:** ໄດ້ຮັບທຶນຈາກໂຄງການໃນປີ 2018 ເປັນມູນຄ່າທັງໝົດແມ່ນ 16,000,000 ກີບ (ສິບຫົກລ້ານກີບ).

ເປັນການເຮັດສວນແບບປະສົມປະສານ ໂດຍແບ່ງອອກເປັນ 2 ກິດຈະກຳຫຼັກຄື: ລ້ຽງໝູ ແລະ ປູກໝາກເຜັດ. ແຕ່ວ່າມາຮອດປັດຈຸບັນ, ເຮັດພຽງແຕ່ປູກໝາກຖົ່ວຍາວ ແລະ ໝາກເຜັດ. ໝູແມ່ນບໍ່ໄດ້ສືບຕໍ່ລ້ຽງ, ເນື່ອງຈາກມີການລະບາດຂອງພະຍາດອະຫິວາຫມູເຮັດໃຫ້ຫມູຕາຍ.

**ການນຳໃຊ້ທຶນ:**
ໃນປີ 2018 ໄດ້ນຳໃຊ້ທຶນເຂົ້າໃນການຈັດຊື້ອຸປະກອນ, ຈ້າງຄົນມາຖາງຫຍ້າ, ເຮັດໜານ, ປູກຜັກ, ເສຍຫຍ້າ, ບຸກເບີກພື້ນທີ່ສວນ, ຊື້ອຸປະກອນເພື່ອຕັ້ງຄອກໝູ ແລະ ຊື້ແນວພັນເຊັ່ນ: ແນວພັນໝາກເຜັດ, ຊື້ໝູ, ຄ່າແຮງງານ ແລະ ຄ່ານາຍຊ່າງ.

**ເປົ້າໝາຍ:**
ໃນປີ 2021 ຢາກເພີ່ມປະລິມານການຂາຍໝາກເຜັດດິບໃຫ້ໄດ້ 500 ກິໂລ/ຊຸດ ແລະ ໝາກເຜັດແຫ້ງໃຫ້ໄດ້ 100 ກິໂລ/ຊຸດ, ເພີ່ມປະລິມານໝູໃຫ້ໄດ້ 20 ໂຕ/ຊຸດ, ເພີ່ມຂະຫຍາຍກິດຈະກຳໃຫມ່ເຊັ່ນ: ການຜະລິດເຫັດນາງຟ້າ - ເຫັດນາງລົມໃຫ້ໄດ້ 1,500 ເບົ້າ/ຊຸດ.

**ບັນຫາທີ່ພົບພໍ້:**
ຜະລິດຕະພັນຍັງບໍ່ພຽງພໍເພື່ອຕອບສະໜອງຕາມຄວາມຕ້ອງການຂອງຕະຫລາດ ເຮັດໃຫ້ບໍ່ສາມາດຕີລາຄາຕະຫຼາດເປັນວົງກ້ວາງ, ພົບບັນຫາດ້ານສະພາບອາກາດ ໃນປີ 2020 ຝົນຕົກຫຼາຍເຮັດໃຫ້ນໍ້າຖ້ວມ, ປູກໝາກເຜັດບໍ່ຂຶ້ນຮາກຕົ້ນໝາກເຜັດເນົ່າ. ໝູເປັນອະຫິວາ, ໝູຕາຍຫຼາຍ ຈຶ່ງໄດ້ຢຸດລ້ຽງໝູແຕ່ປີ 2021. ແຜນທີ່ຈະປູກເຫັດນາງຟ້າ-ເຫັດນາງລົມ ແມ່ນບໍ່ໄດ້ເຮັດ ເພາະວ່າຂີ້ເລື່ອຍຫາຍາກ ບໍ່ມີໂຮງເລື່ອຍໃນພື້ນທີ່ໃກ້ຄຽງ.

**ລາຍຮັບຍັງບໍ່ໄດ້ຫັກຄ່າໃຊ້ຈ່າຍ:**
- ໃນປີ 2019 ມີລາຍຮັບຈາກການຂາຍຫມາກເຜັດດິບ 482 ກິໂລ= 8,676,000 ກີບ, ຂາຍໝູ 6 ໂຕ= 4,800,000 ກີບ, ລວມ 13,476,000 ກີບ.
- ໃນປີ 2020 ຂາຍຫມາກເຜັດດິບ 240 ກິໂລ=2,880,000 ກີບ, ຂາຍໝາກຖົ່ວ 3,400 ກິໂລ=5,440,000 ກີບ, ລວມ 8,320,000 ກີບ.
- ໃນປີ 2021 ຂາຍໝາກເຜັດດິບ 172 ກິໂລ=2,580,000, ຂາຍໝາກຖົ່ວຈຳນວນ 2,700 ກິໂລ=4,320,000, ລວມ 6,900,000 ກີບ.



